ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 03 /ລບ
ນະຄອນຫຼວງວຽງຈັນ, ວັນທີ 10.01.2020.

# ດຳລັດ
# ວ່າດ້ວຍຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາຊັ້ນສູງ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ສະບັບເລກທີ 74/ສພຊ, ລົງວັນທີ 18 ທັນວາ 2015;
- ອີງຕາມ ໜັງສືສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 1462/ສສກ, ລົງວັນທີ 30 ກັນຍາ 2019.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາຊັ້ນສູງ ເພື່ອເປັນບ່ອນອີງໃຫ້ແກ່ສະຖານການສຶກສາຊັ້ນສູງ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ໃຫ້ມີຄວາມເປັນເອກະພາບ, ມີຄວາມໂປ່ງໃສ, ມີຄຸນນະພາບ ແລະ ມີປະສິດທິຜົນ ແນໃສ່ສົ່ງເສີມໃຫ້ຄູຢູ່ສະຖານການສຶກສາຊັ້ນສູງມີການພັດທະນາ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ສາມາດເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ.

**ມາດຕາ 2 ຕຳແໜ່ງວິຊາການຄູຢູ່ສະຖານການສຶກສາຊັ້ນສູງ**

ຕຳແໜ່ງວິຊາການຄູຢູ່ສະຖານການສຶກສາຊັ້ນສູງ ແມ່ນ ຕຳແໜ່ງວິທະຍາສາດຂອງຄູປະຈຳ ແລະ ຄູບໍ່ປະຈຳ ທີ່ມີຜົນງານດີເດັ່ນ ໃນການປະຕິບັດໜ້າທີ່ສິດສອນ, ຖ່າຍທອດຄວາມຮູ້, ຄວາມສາມາດທາງດ້ານວິຊາການ ໃຫ້ຜູ້ຮຽນ ແລະ ຄົ້ນຄວ້າວິທະຍາສາດ ຢູ່ສະຖານການສຶກສາຊັ້ນສູງ ລວມທັງຕຳແໜ່ງວິຊາການຄູທີ່ໄດ້ຮັບການແຕ່ງຕັ້ງ ເພື່ອເປັນກຽດ ຍົກຍ້ອງຖານະ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄູປະຈຳ** ໝາຍເຖິງ ຄູທີ່ປະຕິບັດໜ້າທີ່ສິດສອນປະຈຳ ຢູ່ສະຖານການສຶກສາຊັ້ນສູງ ຊຶ່ງໄດ້ສິດສອນວິຊາ ໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນຫຼັກສູດ ພ້ອມທັງຮັບຜິດຊອບການຝຶກອົບຮົມ, ເປັນທີ່ປຶກສາໃຫ້ແກ່ນັກສຶກສາ, ນັກຄົ້ນຄວ້າ, ເຮັດການຄົ້ນຄວ້າວິທະຍາສາດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງສະຖານການສຶກສາຊັ້ນສູງ;

2. **ຄູບໍ່ປະຈຳ** ໝາຍເຖິງ ບຸກຄົນໃດໜຶ່ງທີ່ຖືກເຊີນຈາກພາຍນອກ ຊຶ່ງບໍ່ສັງກັດຢູ່ສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ ເພື່ອມາສິດສອນ, ຖ່າຍທອດຄວາມຮູ້ໃຫ້ນັກສຶກສາ ແລະ ນັກຄົ້ນຄວ້າ, ເປັນບາງຄັ້ງ ຫຼື ບາງໄລຍະ ດ້ວຍວິທີການສິດສອນໃນຮູບແບບຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນຫຼັກສູດ;

3. **ຜົນງານການສິດສອນ** ໝາຍເຖິງ ຫຼັກຖານການສິດສອນຕົວຈິງ ທີ່ສະແດງໃຫ້ເຫັນເຖິງຄວາມສາມາດ ແລະ ຄຸນນະພາບດ້ານການສິດສອນ ຂອງຜູ້ສະເໜີຂໍຕຳແໜ່ງວິຊາການຄູ;

4. **ຜົນງານທາງວິຊາການ** ໝາຍເຖິງ ເອກະສານ ຫຼື ຫຼັກຖານ ທີ່ສ້າງຂຶ້ນຈາກຄວາມຮູ້, ຄວາມສາມາດ, ທັກສະ ແລະ ປະສົບການ ຂອງຜູ້ສະເໜີຂໍຕຳແໜ່ງວິຊາການຄູ ໂດຍຜ່ານການສຶກສາ, ຄົ້ນຄວ້າ ແລະ ໄດ້ນຳໄປໃຊ້ໃນວຽກງານຕົວຈິງ ຊຶ່ງມີຜົນປະໂຫຍດຕໍ່ການພັດທະນາການສຶກສາ ແລະ ຄວາມກ້າວໜ້າດ້ານວິຊາການ ເປັນຕົ້ນ ເອກະສານປະກອບການສອນ, ເອກະສານປະກອບບົດບັນລະຍາຍການສອນ, ປຶ້ມ-ຕຳລາ, ບົດຂຽນທາງວິຊາການ, ບົດຄົ້ນຄວ້າວິທະຍາສາດ;

5. **ຄະນະກຳມະການສະເພາະ** ໝາຍເຖິງ ຄະນະກຳມະການ ທີ່ຖືກແຕ່ງຕັ້ງໂດຍຄະນະບໍດີຂອງຄະນະວິຊາທີ່ກ່ຽວຂ້ອງ ເພື່ອດຳເນີນການປະເມີນຜົນງານ ແລະ ຄຸນສົມບັດສິນທຳປະຕິວັດ ຂອງຜູ້ສະເໜີຂໍຕຳແໜ່ງວິຊາການຄູ ໃນລະດັບຄະນະວິຊາ ຊຶ່ງປະກອບດ້ວຍ ຮອງຄະນະບໍດີຝ່າຍວິຊາການ, ຫົວໜ້າພາກວິຊາ, ຄູອາຈານ ແລະ ຕົວແທນອົງການຈັດຕັ້ງມະຫາຊົນ.

**ມາດຕາ 4 ຂອບເຂດການນຳໃຊ້ດຳລັດ**

ດຳລັດສະບັບນີ້ ນຳໃຊ້ສຳລັບ ຄູປະຈຳ ແລະ ຄູບໍ່ປະຈຳ ຢູ່ສະຖານການສຶກສາຊັ້ນສູງ ລວມທັງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ພົວພັນ ແລະ ເຄື່ອນໄຫວວຽກງານ ກ່ຽວກັບຕຳແໜ່ງວິຊາການຄູຢູ່ສະຖານການສຶກສາຊັ້ນສູງ ໃນຂອບເຂດທົ່ວປະເທດ.

## ໝວດທີ 2
## ຂັ້ນຂອງຕຳແໜ່ງວິຊາການຄູ

**ມາດຕາ 5 ຂັ້ນຂອງຕຳແໜ່ງວິຊາການຄູ**

ຕຳແໜ່ງວິຊາການຄູ ມີ ສີ່ ຂັ້ນ ດັ່ງນີ້:

1. ສາດສະດາຈານ;
2. ຮອງສາດສະດາຈານ;
3. ອາຈານ;
4. ຜູ້ຊ່ວຍອາຈານ.

**ມາດຕາ 6 ຕໍາແໜ່ງວິຊາການຄູຂັ້ນສາດສະດາຈານ**

ຕໍາແໜ່ງວິຊາການຄູຂັ້ນສາດສະດາຈານ ແມ່ນ ຕໍາແໜ່ງວິຊາການຄູລະດັບສູງສຸດ ຊຶ່ງຂຽນຫຍໍ້ວ່າ "ສຈ." ສໍາລັບຄູສອນປະຈໍາທີ່ປະຕິບັດໜ້າທີ່ສິດສອນ, ນິເທດ, ປາຖະກະຖາ, ຝຶກອົບຮົມ ແລະ ຄົ້ນຄວ້າວິທະຍາສາດ ຢູ່ສະຖານການສຶກສາຊັ້ນສູງ.

ນອກຈາກຕໍາແໜ່ງວິຊາການຂັ້ນສາດສະດາຈານ ສໍາລັບຄູສອນປະຈໍາຢູ່ສະຖານການສຶກສາຊັ້ນສູງແລ້ວ ຍັງມີຕໍາແໜ່ງວິຊາການຂັ້ນສາດສະດາຈານສໍາລັບຄູສອນບໍ່ປະຈໍາ ຊຶ່ງປະກອບດ້ວຍ ສາດສະດາຈານກຽດຕິຄຸນ, ສາດສະດາຈານກິດຕິມະສັກ ແລະ ສາດສະດາຈານພິເສດ.

**ມາດຕາ 7 ຕໍາແໜ່ງວິຊາການຄູຂັ້ນຮອງສາດສະດາຈານ**

ຕໍາແໜ່ງວິຊາການຄູຂັ້ນຮອງສາດສະດາຈານ ແມ່ນ ຕໍາແໜ່ງວິຊາການຄູລະດັບສູງ ຊຶ່ງຂຽນຫຍໍ້ວ່າ "ຮສ." ສໍາລັບຄູສອນປະຈໍາທີ່ປະຕິບັດໜ້າທີ່ສິດສອນ, ນິເທດ, ປາຖະກະຖາ, ຝຶກອົບຮົມ ແລະ ຄົ້ນຄວ້າວິທະຍາສາດ ຢູ່ສະຖານການສຶກສາຊັ້ນສູງ.

**ມາດຕາ 8 ຕໍາແໜ່ງວິຊາການຄູຂັ້ນອາຈານ**

ຕໍາແໜ່ງວິຊາການຄູຂັ້ນອາຈານ ແມ່ນ ຕໍາແໜ່ງວິຊາການຄູລະດັບກາງ ຊຶ່ງຂຽນຫຍໍ້ວ່າ "ອຈ." ສໍາລັບຄູສອນປະຈໍາທີ່ປະຕິບັດໜ້າທີ່ສິດສອນ ແລະ ຄົ້ນຄວ້າວິທະຍາສາດ ຢູ່ສະຖານການສຶກສາຊັ້ນສູງ.

**ມາດຕາ 9 ຕໍາແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ**

ຕໍາແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ ແມ່ນ ຕໍາແໜ່ງວິຊາການຄູລະດັບທໍາອິດ ຊຶ່ງຂຽນຫຍໍ້ວ່າ "ຊອ." ສໍາລັບຄູສອນປະຈໍາທີ່ປະຕິບັດໜ້າທີ່ສິດສອນ ແລະ ຄົ້ນຄວ້າວິທະຍາສາດ ຢູ່ສະຖານການສຶກສາຊັ້ນສູງ.

## ໝວດທີ 3
## ເງື່ອນໄຂ ແລະ ມາດຕະຖານ

**ມາດຕາ 10 ເງື່ອນໄຂສໍາລັບຕໍາແໜ່ງວິຊາການຄູຂັ້ນສາດສະດາຈານ**

ຜູ້ທີ່ຈະໄດ້ຮັບຕໍາແໜ່ງວິຊາການຄູຂັ້ນສາດສະດາຈານ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ສາດສະດາຈານ

1.1. ມີປະກາສະນີຍະບັດປະລິນຍາເອກ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສິບເອັດ ປີ;

1.2. ດໍາລົງຕໍາແໜ່ງຮອງສາດສະດາຈານ ໃນສາຂາວິຊາດຽວກັນມາແລ້ວ ຢ່າງໜ້ອຍ ສີ່ ປີ;

1.3. ມີຄວາມຮູ້, ຄວາມສາມາດທາງດ້ານວິຊາການໃນສາຂາວິຊາ ຫຼື ຂະແໜງວິຊາສະເພາະໃດໜຶ່ງ, ມີຫົວຄິດປະດິດສ້າງ ແລະ ສາມາດນໍາໃຊ້ຄວາມຮູ້, ຄວາມສາມາດດັ່ງກ່າວ ເຂົ້າໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບໃຊ້ສັງຄົມ ຢ່າງມີປະສິດທິຜົນ.

2. ສາດສະດາຈານກຽດຕິຄຸນ

2.1. ໄດ້ຮັບການແຕ່ງຕັ້ງຕໍາແໜ່ງວິຊາການຄູຂັ້ນ ສາດສະດາຈານ ຫຼື ຮອງສາດສະດາຈານ ແລະ ພົ້ນຈາກໜ້າທີ່ລັດຖະການ ຢ່າງເປັນທາງການ;

2.2. ຍັງສືບຕໍ່ສ້າງຜົນງານດ້ານວິຊາການທີ່ພົ້ນເດັ່ນ ແລະ ສືບຕໍ່ປະກອບສ່ວນສິດສອນ ໃນສາຂາວິຊາສະເພາະ ໃດໜຶ່ງ ຢູ່ສະຖານການສຶກສາຊັ້ນສູງ.

3. ສາດສະດາຈານກິດຕິມະສັກ

3.1. ມີບົດຮຽນ ແລະ ປະສົບການ ໃນການດໍາລົງຕໍາແໜ່ງ ແລະ ປະຕິບັດໜ້າທີ່ວຽກງານ ໃດໜຶ່ງທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ ແລະ ສັງຄົມ;

3.2. ມີຜົນງານດີເດັ່ນ ຕໍ່ການພັດທະນາສະຖານການສຶກສາຊັ້ນສູງ ໃດໜຶ່ງ ແລະ ຖືກຮັບຮູ້ຢ່າງກວ້າງຂວາງຈາກສັງຄົມ.

4. ສາດສະດາຈານພິເສດ

4.1. ເປັນຜູ້ຊ່ຽວຊານສະເພາະດ້ານ, ນັກປາຖະກະຖາພິເສດ ຫຼື ເປັນຄູຮັບເຊີນ ຢູ່ສະຖານການສຶກສາຊັ້ນສູງ ໃດໜຶ່ງ;

4.2. ມີປະກາສະນີຍະບັດລະດັບປະລິນຍາໂທ ຂຶ້ນໄປ.

**ມາດຕາ 11 ເງື່ອນໄຂສໍາລັບຕໍາແໜ່ງວິຊາການຄູຂັ້ນຮອງສາດສະດາຈານ**

ຜູ້ທີ່ຈະໄດ້ຮັບຕໍາແໜ່ງວິຊາການຄູຂັ້ນຮອງສາດສະດາຈານ ຕ້ອງມີເງື່ອນໄຂ ໃດໜຶ່ງ ດັ່ງນີ້:

1. ມີປະກາສະນີຍະບັດລະດັບປະລິນຍາເອກ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ເຈັດ ປີ ແລະ ດໍາລົງຕໍາແໜ່ງຂັ້ນອາຈານມາແລ້ວ ຢ່າງໜ້ອຍ ສີ່ ປີ;

2. ມີປະກາສະນີຍະບັດລະດັບປະລິນຍາໂທ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສິບເອັດ ປີ ແລະ ດໍາລົງຕໍາແໜ່ງຂັ້ນອາຈານມາແລ້ວ ຢ່າງໜ້ອຍ ຫົກ ປີ.

3. ມີປະກາສະນີຍະບັດຫຼັງປະລິນຍາຕີ ລົງເລິກໃນຂະແໜງວິຊາສະເພາະ ໃດໜຶ່ງ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສິບສອງ ປີ ແລະ ດໍາລົງຕໍາແໜ່ງຂັ້ນອາຈານມາແລ້ວ ຢ່າງໜ້ອຍ ເຈັດ ປີ.

ນອກຈາກມີເງື່ອນໄຂໃດໜຶ່ງຕາມທີ່ໄດ້ກໍານົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຜູ້ທີ່ຈະໄດ້ຮັບຕໍາແໜ່ງວິຊາການຄູຂັ້ນຮອງສາດສະດາຈານ ຍັງຕ້ອງມີຄວາມຮູ້, ຄວາມສາມາດທາງດ້ານວິຊາການໃນສາຂາວິຊາ ຫຼື ຂະແໜງວິຊາສະເພາະໃດໜຶ່ງ, ມີຫົວຄິດປະດິດສ້າງ ແລະ ສາມາດນໍາໃຊ້ຄວາມຮູ້, ຄວາມສາມາດດັ່ງກ່າວເຂົ້າໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບໃຊ້ສັງຄົມ ຢ່າງມີປະສິດທິຜົນ.

**ມາດຕາ 12 ເງື່ອນໄຂສໍາລັບຕໍາແໜ່ງວິຊາການຄູຂັ້ນອາຈານ**

ຜູ້ທີ່ຈະໄດ້ຮັບຕໍາແໜ່ງວິຊາການຄູຂັ້ນອາຈານ ຕ້ອງມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ມີປະກາສະນີຍະບັດລະດັບປະລິນຍາເອກ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສາມ ປີ;

2. ມີປະກາສະນີຍະບັດລະດັບປະລິນຍາໂທ ແລະ ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ຫ້າ ປີ ແລະ ດໍາລົງຕໍາແໜ່ງວິຊາການຂັ້ນຜູ້ຊ່ວຍອາຈານມາແລ້ວ ຢ່າງໜ້ອຍ ສາມ ປີ;

3. ມີປະກາສະນີຍະບັດຫຼັງປະລິນຍາຕີ ລົງເລິກໃນຂະແໜງວິຊາສະເພາະໃດໜຶ່ງ ແລະ ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ຫົກ ປີ ແລະ ດໍາລົງຕໍາແໜ່ງວິຊາການ ຂັ້ນຜູ້ຊ່ວຍອາຈານມາແລ້ວ ຢ່າງໜ້ອຍ ສີ່ ປີ;

4. ມີປະກາສະນິຍະບັດລະດັບປະລິນຍາຕີ ແລະ ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ເຈັດ ປີ ແລະ ດຳລົງຕຳແໜ່ງຂັ້ນຜູ້ຊ່ວຍອາຈານມາແລ້ວ ຢ່າງໜ້ອຍ ຫ້າ ປີ.

ນອກຈາກມີເງື່ອນໄຂໃດໜຶ່ງຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນອາຈານ ຍັງຕ້ອງມີຄວາມຮູ້, ຄວາມສາມາດທາງດ້ານວິຊາການໃນສາຂາວິຊາ ຫຼື ຂະແໜງວິຊາສະເພາະໃດໜຶ່ງ, ມີຫົວຄິດປະດິດສ້າງ ແລະ ສາມາດນຳໃຊ້ຄວາມຮູ້, ຄວາມສາມາດດັ່ງກ່າວ ເຂົ້າໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບໃຊ້ສັງຄົມ ຢ່າງມີປະສິດທິຜົນ.

**ມາດຕາ 13 ເງື່ອນໄຂສຳລັບຕຳແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ**

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ ຕ້ອງມີເງື່ອນໄຂ ໃດໜຶ່ງ ດັ່ງນີ້:

1. ມີປະກາສະນິຍະບັດປະລິນຍາໂທ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສອງ ປີ ໂດຍບໍ່ນັບໄລຍະເວລາຝຶກງານ;

2. ມີປະກາສະນິຍະບັດຫຼັງປະລິນຍາຕີ ລົງເລິກໃນຂະແໜງວິຊາສະເພາະໃດໜຶ່ງ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສອງ ປີ ໂດຍບໍ່ນັບໄລຍະເວລາຝຶກງານ;

3. ມີປະກາສະນິຍະບັດປະລິນຍາຕີ ແລະ ໄດ້ຜ່ານການສິດສອນມາແລ້ວ ຢ່າງໜ້ອຍ ສອງ ປີ ໂດຍບໍ່ນັບໄລຍະເວລາຝຶກງານ.

ນອກຈາກມີເງື່ອນໄຂໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ ຍັງຕ້ອງມີຄວາມຮູ້, ຄວາມສາມາດທາງດ້ານວິຊາການໃນສາຂາວິຊາ ຫຼື ຂະແໜງວິຊາສະເພາະໃດໜຶ່ງ, ມີຫົວຄິດປະດິດສ້າງ ແລະ ສາມາດນຳໃຊ້ຄວາມຮູ້, ຄວາມສາມາດດັ່ງກ່າວ ເຂົ້າໃນການປະຕິບັດໜ້າທີ່ວຽກງານ ແລະ ຮັບໃຊ້ສັງຄົມ ຢ່າງມີປະສິດທິຜົນ.

**ມາດຕາ 14 ເງື່ອນໄຂສຳລັບຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູແບບຂ້າມຂັ້ນ**

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູແບບຂ້າມຂັ້ນ ຕ້ອງມີເງື່ອນໄຂ ໃດໜຶ່ງ ດັ່ງນີ້:

1. ມີເງື່ອນໄຂຮັບຕຳແໜ່ງວິຊາການຂັ້ນ ອາຈານ ແລະ ຜູ້ຊ່ວຍອາຈານ ສຳລັບຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນອາຈານ;

2. ມີເງື່ອນໄຂຮັບຕຳແໜ່ງວິຊາການຂັ້ນ ອາຈານ ແລະ ຜູ້ຊ່ວຍອາຈານ ແລະ ຮອງສາດສະດາຈານ ສຳລັບຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູ ຂັ້ນຮອງສາດສະດາຈານ.

ສຳລັບຜູ້ທີ່ບໍ່ມີຕຳແໜ່ງວິຊາການຄູ, ຜູ້ທີ່ດຳລົງຕຳແໜ່ງວິຊາການຄູຂັ້ນ ອາຈານ ແລະ ຜູ້ຊ່ວຍອາຈານ ບໍ່ມີເງື່ອນໄຂຈະໄດ້ຮັບຕຳແໜ່ງວິຊາການຄູແບບຂ້າມຂັ້ນ ເປັນຂັ້ນສາດສະດາຈານ.

**ມາດຕາ 15 ມາດຕະຖານລວມສຳລັບຕຳແໜ່ງວິຊາການຄູ**

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຢູ່ສະຖານການສຶກສາຊັ້ນສູງ ຕ້ອງມີມາດຕະຖານລວມ ດັ່ງນີ້:

1. ມີຄຸນສົມບັດສິນທຳປະຕິວັດ, ມີຄຸນທາດການເມືອງໜັກແໜ້ນ, ມີຄວາມເຊື່ອໝັ້ນຕໍ່ແນວທາງນະໂຍບາຍຂອງພັກ, ປະຕິບັດຕາມລະບຽບກົດໝາຍຂອງລັດ ແລະ ມີແບບແຜນດຳລົງຊີວິດທີ່ປອດໃສຂາວສະອາດ;

2. ສາມາດນຳໃຊ້ພາສາລາວ ຢ່າງຖືກຕ້ອງ ແລະ ສາມາດນຳໃຊ້ພາສາຕ່າງປະເທດ ຢ່າງໜ້ອຍ ໜຶ່ງ ພາສາ ໃນລະດັບດີ ເປັນຕົ້ນ ພາສາ ອັງກິດ, ຝຣັ່ງ, ເຢຍລະມັນ, ແອັດສະປາຍ, ລັດເຊຍ, ຈີນ;

3. ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ໃຊ້ອ້າງອີງໃນການສະເໜີຂໍຕໍາແໜ່ງວິຊາການຄູ ຊຶ່ງຕ້ອງບໍ່ແມ່ນສ່ວນໜຶ່ງຂອງວິທະຍານິພົນ;

4. ມີປຶ້ມ-ຕໍາລາ ເພື່ອສິດສອນໃນສະຖານການສຶກສາຊັ້ນສູງ.

ສໍາລັບຜູ້ທີ່ຈະໄດ້ຮັບຕໍາແໜ່ງວິຊາການຄູຢູ່ສະຖານການສຶກສາຊັ້ນສູງ ທີ່ເປັນລັດຖະກອນ ຍັງຕ້ອງມີມາດຕະຖານລວມ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການກ່ຽວກັບຕໍາແໜ່ງວິຊາການຂອງລັດຖະກອນ.

**ມາດຕາ 16 ມາດຕະຖານສະເພາະສໍາລັບຕໍາແໜ່ງວິຊາການຄູ**

ມາດຕະຖານສະເພາະສໍາລັບຕໍາແໜ່ງວິຊາການຄູ ມີ ດັ່ງນີ້:

1. ສາດສະດາຈານ

ຜູ້ທີ່ຈະໄດ້ຮັບຕໍາແໜ່ງວິຊາການຄູຂັ້ນສາດສະດາຈານ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

1.1. ມາດຕະຖານດ້ານໜ້າທີ່ຮັບຜິດຊອບ:

1.1.1. ສອນຢູ່ສະຖານການສຶກສາຊັ້ນສູງທີ່ຕົນສັງກັດ ແລະ ສະຖານການສຶກສາຊັ້ນສູງອື່ນ ໃນສາຂາວິຊາ ໃດໜຶ່ງ ທີ່ກໍານົດໄວ້ໃນຫຼັກສູດທີ່ກ່ຽວຂ້ອງ;

1.1.2. ນໍາພາການຄົ້ນຄວ້າວິທະຍາສາດ, ເປັນທີ່ປຶກສາ ດ້ານວິຊາການ ແລະ ການຂຽນວິທະຍານິພົນຂອງນັກສຶກສາລະດັບປະລິນຍາໂທ ຂຶ້ນໄປ;

1.1.3. ໃຫ້ຄໍາປຶກສາ, ຄໍາແນະນໍາ ດ້ານວິຊາການແກ່ຄູ, ຝຶກອົບຮົມຄູ ແລະ ໃຫ້ບໍລິການວິຊາການແກ່ສັງຄົມ;

1.1.4. ດໍາເນີນການຄົ້ນຄວ້າວິທະຍາສາດ ແລະ ເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດໃນຫົວຂໍ້ໃດໜຶ່ງ ທີ່ຜ່ານການຮັບຮອງ ແລະ ເປັນປະໂຫຍດໃຫ້ແກ່ສະຖານການສຶກສາຊັ້ນສູງ ແລະ ສັງຄົມ;

1.1.5. ໃຫ້ຄໍາປຶກສາ ແລະ ຄໍາແນະນໍາ ກ່ຽວກັບການພັດທະນາວິຊາການ ແກ່ສະຖານການສຶກສາຊັ້ນສູງ.

1.2. ມາດຕະຖານດ້ານຜົນງານ:

1.2.1. ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບການສອນ ຢ່າງໜ້ອຍ ສອງ ວິຊາ ທີ່ມີຄຸນນະພາບດີ ແລະ ນໍາໃຊ້ປະກອບການສອນມາແລ້ວ;

1.2.2. ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບບົດບັນລະຍາຍການສອນ ຢ່າງໜ້ອຍ ສອງ ວິຊາ ທີ່ມີຄຸນນະພາບດີ ແລະ ນໍາໃຊ້ປະກອບການສອນມາແລ້ວ;

1.2.3. ເປັນອາຈານທີ່ປຶກສາໃຫ້ນັກສຶກສາ ທີ່ຂຽນວິທະຍານິພົນລະດັບປະລິນຍາໂທ ຂຶ້ນໄປສໍາເລັດ ຢ່າງໜ້ອຍ ຫ້າ ບົດ;

1.2.4. ມີຜົນງານການແຕ່ງ, ການຮຽບຮຽງ ແລະ ການແປຕໍາລາ ເປັນຂອງຕົນເອງ ຫຼື ມີສ່ວນຮ່ວມຫຼັກ ຊຶ່ງໄດ້ຮັບການຮັບຮອງດ້ານວິຊາການ ໃນສາຂາວິຊາສະເພາະທີ່ກ່ຽວຂ້ອງ ແລະ ໄດ້ຮັບການຈັດພິມເປັນເຫຼັ້ມຈາກໂຮງພິມ ຫຼື ສໍານັກພິມ ແລະ ຖືກຈັດເຂົ້າຫ້ອງສະໝຸດ ຢ່າງໜ້ອຍ ສອງ ເຫຼັ້ມ;

1.2.5. ມີຜົນງານທາງດ້ານການຄົ້ນຄວ້າວິທະຍາສາດເປັນຂອງຕົນເອງ ຢ່າງໜ້ອຍ ສາມ ຫົວຂໍ້ ຫຼື ເປັນນັກຄົ້ນຄວ້າຫຼັກ ສອງ ຫົວຂໍ້ ແລະ ນັກຄົ້ນຄວ້າຮ່ວມ ສອງ ຫົວຂໍ້ ຊຶ່ງບໍ່ຊໍ້າກັນກັບຫົວຂໍ້ທີ່ໄດ້ຄົ້ນຄວ້າເພື່ອສະເໜີເອົາຕໍາແໜ່ງວິຊາການຄູ ຢູ່ສະຖານການສຶກສາຊັ້ນສູງມາກ່ອນ, ຖືກນໍາໃຊ້ຢ່າງກວ້າງຂວາງໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ໄດ້ຮັບການພິມເຜີຍແຜ່ລົງໃນວາລະສານ ເປັນທີ່ຍອມຮັບຂອງສະພາວິຊາການ ພາຍໃນ ຫຼື ຕ່າງປະເທດ;

1.2.6. ມີຜົນງານທາງວິຊາການໃນລັກສະນະອື່ນ ເປັນຕົ້ນ ບົດຄົ້ນຄວ້າວິທະຍາສາດ, ເອກະສານປະກອບການສອນ, ສິ່ງປະດິດ ທີ່ບໍ່ພົວພັນໂດຍກົງກັບວິຊາສະເພາະ ທີ່ສະເໜີຂໍຕຳແໜ່ງວິຊາການຄູ ໂດຍມີການຢັ້ງຢືນ ແລະ ຮັບຮອງຈາກອົງການວິຊາການໃດໜຶ່ງ ທີ່ໜ້າເຊື່ອຖື.

2. ສາດສະດາຈານກຽດຕິຄຸນ

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນສາດສະດາຈານກຽດຕິຄຸນ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

2.1. ເປັນທີ່ປຶກສາດ້ານວິຊາການ ໃນການຄົ້ນຄວ້າວິທະຍາສາດ ໃຫ້ແກ່ສະຖານການສຶກສາຊັ້ນສູງ;

2.2. ມີຄວາມຊຳນານງານດ້ານວິຊາການ ໃນສາຂາວິຊາສະເພາະໃດໜຶ່ງ ຢ່າງເລິກເຊິ່ງ ແລະ ສາມາດຖ່າຍທອດຄວາມຮູ້ ໃຫ້ແກ່ບັນດາຄູ ແລະ ນັກຄົ້ນຄວ້າວິທະຍາສາດ;

2.3. ມີຜົນງານດ້ານ ການສິດສອນ ແລະ ການຄົ້ນຄວ້າວິທະຍາສາດ ທີ່ດີເດັ່ນເປັນຂອງຕົນເອງ ແລະ ເປັນທີ່ຍອມຮັບຂອງສະພາວິຊາການ ພາຍໃນ ຫຼື ຕ່າງປະເທດ.

3. ສາດສະດາຈານກິດຕິມະສັກ

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນສາດສະດາຈານກິດຕິມະສັກ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

3.1. ມີຜົນງານດີເດັ່ນຕໍ່ ສະຖານການສຶກສາຊັ້ນສູງ ຫຼື ສັງຄົມ ຊຶ່ງສະແດງອອກໃນການໃຫ້ຄຳເຫັນດ້ານນະໂຍບາຍ ແລະ ຄຳແນະນຳ ກ່ຽວກັບການພັດທະນາທາງກົງ ແລະ ທາງອ້ອມ;

3.2. ຜ່ານການພິຈາລະນາຮັບຮອງຂອງສະພາມະຫາວິທະຍາໄລ ຫຼື ສະພາສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ.

4. ສາດສະດາຈານພິເສດ

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນສາດສະດາຈານພິເສດ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

4.1. ມີຄວາມຮູ້, ຄວາມສາມາດ ແລະ ຄວາມຊຳນານງານດ້ານວິຊາການໃນສາຂາວິຊາສະເພາະໃດໜຶ່ງ, ມີຫົວຄິດປະດິດສ້າງໃນການປະຕິບັດໜ້າທີ່ວຽກງານ ຢ່າງມີປະສິດທິຜົນ;

4.2. ມີຜົນງານດ້ານ ການສິດສອນ ແລະ ການຄົ້ນຄວ້າວິທະຍາສາດເປັນຂອງຕົນເອງ ຢ່າງໜ້ອຍສອງ ຫົວຂໍ້ ຊຶ່ງບໍ່ຊ້ຳກັນກັບຫົວຂໍ້ທີ່ໄດ້ຄົ້ນຄວ້າ ເພື່ອສະເໜີຂໍຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາຊັ້ນສູງມາກ່ອນ, ຖືກນຳໃຊ້ຢ່າງກວ້າງຂວາງໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ໄດ້ຮັບການພິມເຜີຍແຜ່ລົງໃນວາລະສານ ເປັນທີ່ຍອມຮັບ ຂອງສະພາວິຊາການ ພາຍໃນ ຫຼື ຕ່າງປະເທດ.

5. ຮອງສາດສະດາຈານ

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນຮອງສາດສະດາຈານ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

5.1. ມາດຕະຖານດ້ານໜ້າທີ່ຮັບຜິດຊອບ:

5.1.1. ສອນຢູ່ສະຖານການສຶກສາຊັ້ນສູງທີ່ຕົນສັງກັດ ແລະ ສະຖານການສຶກສາຊັ້ນສູງອື່ນ ໃນສາຂາວິຊາໃດໜຶ່ງ ທີ່ກຳນົດໄວ້ໃນຫຼັກສູດທີ່ກ່ຽວຂ້ອງ;

5.1.2. ນຳພາການຄົ້ນຄວ້າວິທະຍາສາດ, ເປັນທີ່ປຶກສາ ດ້ານວິຊາການ ແລະ ການຂຽນບົດໂຄງການຈົບຊັ້ນຂອງນັກສຶກສາລະດັບປະລິນຍາຕີ ແລະ ການຂຽນວິທະຍານິພົນຂອງນັກສຶກສາລະດັບປະລິນຍາໂທ;

5.1.3. ໃຫ້ຄຳປຶກສາ, ຄຳແນະນຳ ດ້ານວິຊາການ ແກ່ຄູ, ຝຶກອົບຮົມຄູ ແລະ ໃຫ້ບໍລິການວິຊາການແກ່ສັງຄົມ;

5.1.4. ດຳເນີນການຄົ້ນຄວ້າວິທະຍາສາດ ແລະ ເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດ ໃນຫົວຂໍ້ໃດໜຶ່ງ ທີ່ຜ່ານການຮັບຮອງ ແລະ ເປັນປະໂຫຍດໃຫ້ແກ່ສະຖານການສຶກສາຊັ້ນສູງ ແລະ ສັງຄົມ;

5.2. ມາດຕະຖານດ້ານຜົນງານ:

5.2.1. ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບການສອນ ຢ່າງໜ້ອຍ ສອງ ວິຊາ ທີ່ມີຄຸນນະພາບດີ ແລະ ນຳໃຊ້ປະກອບການສອນມາແລ້ວ;

5.2.2. ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບບົດບັນລະຍາຍການສອນ ຢ່າງໜ້ອຍ ສອງ ວິຊາ ທີ່ມີຄຸນນະພາບດີ ແລະ ນຳໃຊ້ປະກອບການສອນມາແລ້ວ;

5.2.3. ເປັນອາຈານທີ່ປຶກສາໃນການຂຽນບົດໂຄງການຈົບຊັ້ນຂອງນັກສຶກສາລະດັບປະລິນຍາຕີສຳເລັດ ຢ່າງໜ້ອຍ ສິບສອງ ບົດ;

5.2.4. ມີຜົນງານການແຕ່ງ, ການຮຽບຮຽງ ແລະ ການແປຕຳລາ ເປັນຂອງຕົນເອງ ຫຼື ມີສ່ວນຮ່ວມຫຼັກ ຊຶ່ງໄດ້ຮັບການຮັບຮອງດ້ານວິຊາການ ໃນສາຂາວິຊາສະເພາະທີ່ກ່ຽວຂ້ອງ ແລະ ໄດ້ຮັບການຈັດພິມເປັນເຫຼັ້ມຈາກໂຮງພິມ ຫຼື ສຳນັກພິມ ແລະ ຖືກຈັດເຂົ້າຫ້ອງສະໝຸດ ຢ່າງໜ້ອຍ ໜຶ່ງ ເຫຼັ້ມ;

5.2.5. ມີຜົນງານທາງດ້ານການຄົ້ນຄວ້າວິທະຍາສາດເປັນຂອງຕົນເອງ ຢ່າງໜ້ອຍ ໜຶ່ງ ຫົວຂໍ້ ແລະ ເປັນນັກຄົ້ນຄວ້າຮ່ວມ ສອງ ຫົວຂໍ້ ຊຶ່ງບໍ່ຊ້ຳກັນກັບຫົວຂໍ້ທີ່ໄດ້ຄົ້ນຄວ້າ ເພື່ອສະ ເໜີເອົາຕຳແໜ່ງ ວິຊາການຄູຢູ່ສະຖານການສຶກສາຊັ້ນສູງມາກ່ອນ, ຖືກນຳໃຊ້ຢ່າງກວ້າງຂວາງໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ໄດ້ຮັບການພິມເຜີຍແຜ່ລົງໃນວາລະສານ ເປັນທີ່ຍອມຮັບຂອງສະພາວິຊາການ ພາຍໃນ ຫຼື ຕ່າງປະເທດ;

5.2.6. ມີຜົນງານທາງວິຊາການໃນລັກສະນະອື່ນ ເປັນຕົ້ນ ບົດຄົ້ນຄວ້າວິທະຍາສາດ, ເອກະສານປະກອບການສອນ, ສິ່ງປະດິດ ທີ່ບໍ່ພົວພັນໂດຍກົງກັບວິຊາສະເພາະ ທີ່ສະເໜີຂໍຕຳແໜ່ງ ວິຊາການຄູ ໂດຍມີການຢັ້ງຢືນ ແລະ ຮັບຮອງຈາກອົງການວິຊາການໃດໜຶ່ງ ທີ່ໜ້າເຊື່ອຖື.

6. ອາຈານ

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນອາຈານ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

6.1. ມາດຕະຖານດ້ານໜ້າທີ່ຮັບຜິດຊອບ:

6.1.1. ສອນຢູ່ສະຖານການສຶກສາຊັ້ນສູງທີ່ຕົນສັງກັດ ແລະ ສະຖານການສຶກສາຊັ້ນສູງອື່ນໃນສາຂາວິຊາໃດໜຶ່ງ ທີ່ກຳນົດໄວ້ໃນຫຼັກສູດທີ່ກ່ຽວຂ້ອງ;

6.1.2. ເປັນທີ່ປຶກສາໃນການຂຽນບົດໂຄງການຈົບຊັ້ນຂອງນັກສຶກສາລະດັບປະລິນຍາຕີ ແລະ ການຂຽນວິທະຍານິພົນຂອງນັກສຶກສາລະດັບປະລິນຍາໂທ;

6.1.3. ໃຫ້ຄຳປຶກສາ, ຄຳແນະນຳ ດ້ານວິຊາການ ແກ່ຄູ, ຝຶກອົບຮົມຄູ ແລະ ໃຫ້ບໍລິການວິຊາການແກ່ສັງຄົມ.

6.2. ມາດຕະຖານດ້ານຜົນງານ:

6.2.1 ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບການສອນ ຢ່າງໜ້ອຍ ສອງ ວິຊາ ທີ່ມີຄຸນນະພາບດີ ແລະ ນຳໃຊ້ປະກອບການສອນມາແລ້ວ;

6.2.2 ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບບົດບັນລະຍາຍການສອນ ຢ່າງໜ້ອຍ ສອງ ວິຊາ ທີ່ມີຄຸນນະພາບດີ ແລະ ນຳໃຊ້ປະກອບການສອນມາແລ້ວ;

6.2.3 ເປັນອາຈານທີ່ປຶກສາໃນການຂຽນບົດໂຄງການຈົບຊັ້ນຂອງນັກສຶກສາລະດັບປະລິນຍາຕີສຳເລັດ ຢ່າງໜ້ອຍ ຫົກ ບົດ;

6.2.4 ມີຜົນງານທາງດ້ານການຄົ້ນຄວ້າວິທະຍາສາດເປັນຂອງຕົນເອງ ຢ່າງໜ້ອຍ ໜຶ່ງ ຫົວຂໍ້ ແລະ ເປັນນັກຄົ້ນຄວ້າຮ່ວມ ສອງ ຫົວຂໍ້ ຊຶ່ງບໍ່ຊ້ຳກັນກັບຫົວຂໍ້ທີ່ໄດ້ຄົ້ນຄວ້າ ເພື່ອສະເໜີເອົາຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາຊັ້ນສູງມາກ່ອນ, ຖືກນຳໃຊ້ຢ່າງກວ້າງຂວາງໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ໄດ້ຮັບການພິມເຜີຍແຜ່ລົງໃນວາລະສານ ເປັນທີ່ຍອມຮັບຂອງສະພາວິຊາການ ພາຍໃນ ຫຼື ຕ່າງປະເທດ.

7. ຜູ້ຊ່ວຍອາຈານ

ຜູ້ທີ່ຈະໄດ້ຮັບຕຳແໜ່ງວິຊາການຄູຂັ້ນຜູ້ຊ່ວຍອາຈານ ຕ້ອງມີມາດຕະຖານສະເພາະ ດັ່ງນີ້:

7.1. ມາດຕະຖານດ້ານໜ້າທີ່ຮັບຜິດຊອບ:

7.1.1. ສອນຢູ່ສະຖານການສຶກສາຊັ້ນສູງທີ່ຕົນສັງກັດ ໃນສາຂາວິຊາສະເພາະໃດໜຶ່ງ ທີ່ກຳນົດໄວ້ໃນ ຫຼັກສູດທີ່ກ່ຽວຂ້ອງ;

7.1.2. ນຳພາພາກປະຕິບັດ ໃນຫ້ອງທົດລອງ ແລະ ພາກສະໜາມ ຂອງນັກສຶກສາ;

7.1.3. ຮັບຜິດຊອບຄຸ້ມຄອງ ການຮຽນ ແລະ ຄຸນສົມບັດ ຂອງນັກສຶກສາ ຕາມທີ່ໄດ້ຮັບ ມອບໝາຍ.

7.2. ມາດຕະຖານດ້ານຜົນງານ:

7.2.1. ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບການສອນ ຢ່າງໜ້ອຍ ໜຶ່ງ ວິຊາ ທີ່ມີຄຸນນະພາບດີ ແລະ ນຳໃຊ້ປະກອບການສອນມາແລ້ວ;

7.2.2. ຄົ້ນຄວ້າ, ຮຽບຮຽງ ເອກະສານປະກອບບົດບັນລະຍາຍການສອນ ຢ່າງໜ້ອຍ ໜຶ່ງ ວິຊາ ທີ່ມີຄຸນນະພາບດີ ແລະ ນຳໃຊ້ປະກອບການສອນມາແລ້ວ;

7.2.3. ມີສ່ວນຮ່ວມໃນທີມງານການຄົ້ນຄວ້າວິທະຍາສາດໃນຫົວຂໍ້ໃດໜຶ່ງ ໃນຖານະເປັນຜູ້ ຄົ້ນຄວ້າຮ່ວມ ຊຶ່ງບໍ່ແມ່ນຜູ້ເກັບຂໍ້ມູນ ແລະ ໄດ້ຮັບການຢັ້ງຢືນຈາກສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ.

## ໝວດທີ 4
## ການຮັບຮອງ ແລະ ການແຕ່ງຕັ້ງ

### ມາດຕາ 17 ການກຳນົດຈຳນວນຕຳແໜ່ງວິຊາການຄູ

ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ຄົ້ນຄວ້າ ແລະ ກຳນົດຕົວເລກຕຳແໜ່ງວິຊາການຄູ ຢູ່ສະຖານການສຶກສາຊັ້ນສູງ ສຳລັບຄູປະຈຳໃນແຕ່ລະປີ ໂດຍມີການປະສານສົມທົບກັບພາກສ່ວນທີ່ ກ່ຽວຂ້ອງ ແລະ ປະກາດໃຫ້ສະຖານການສຶກສາຊັ້ນສູງ ໃນຂອບເຂດທົ່ວປະເທດ ຄັດເລືອກ ແລະ ຮັບຮອງ ຄູປະຈຳທີ່ມີເງື່ອນໄຂ ແລະ ມາດຕະຖານຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ແລ້ວນຳສະເໜີ ກະຊວງສຶກສາທິການ ແລະ ກິລາ ພິຈາລະນາກ່ຽວກັບການແຕ່ງຕັ້ງ.

### ມາດຕາ 18 ການຄັດເລືອກ, ການຮັບຮອງ ແລະ ການແຕ່ງຕັ້ງ

ການຄັດເລືອກ, ການຮັບຮອງ ແລະ ການແຕ່ງຕັ້ງ ຕຳແໜ່ງວິຊາການຄູຢູ່ ສະຖານການສຶກສາ ຊັ້ນສູງ ໃຫ້ປະຕິບັດ ດັ່ງນີ້:

1. ສາດສະດາຈານ ແລະ ຮອງສາດສະດາຈານ

1.1. ຄະນະບໍດີ ແຕ່ງຕັ້ງຄະນະກຳມະການສະເພາະ ເພື່ອປະເມີນຜົນງານການສິດສອນ, ຜົນງານທາງວິຊາການ ແລະ ຄຸນສົມບັດສົມທຳປະຕິວັດ ບົນພື້ນຖານການຍື່ນຄຳຮ້ອງ ແລະ ເອກະສານປະກອບຂອງຄູປະຈຳທີ່ມີຈຸດປະສົງຂໍຕຳແໜ່ງວິຊາການຄູແຕ່ລະຂັ້ນ ຕາມແບບພິມປະເມີນຜົນ ແລ້ວນຳສະເໜີສະພາມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງ;

1.2. ປະທານສະພາ ມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງ ແຕ່ງຕັ້ງຄະນະກຳມະການທີ່ປະກອບດ້ວຍ ເກົ້າ ທ່ານ ທີ່ເປັນຜູ້ຊົງຄຸນວຸດທິໃນສາຂາວິຊາທີ່ກ່ຽວຂ້ອງ ຊຶ່ງປະກອບດ້ວຍ ບຸກຄົນພາຍນອກທີ່ມີຈຳນວນຫຼາຍກວ່າເຄິ່ງໜຶ່ງ ເພື່ອຄັດເລືອກດ້ວຍການລົງຄະແນນ ສຽງ ບົນພື້ນຖານການປະເມີນຜົນງານດ້ານວິຊາການ ຕາມແບບພິມປະເມີນຜົນ ພາຍໃນກຳນົດ ສິບຫ້າ ວັນ;

1.3. ສະພາ ມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ ເປີດກອງປະຊຸມຄົ້ນຄວ້າຜົນການຄັດເລືອກຂອງຄະນະກຳມະການ ແລ້ວລົງຄະແນນສຽງແບບປິດລັບ ເພື່ອຮັບຮອງ ຊຶ່ງຄູປະຈຳທີ່ຜ່ານການຄັດເລືອກຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ;

1.4. ປະທານສະພາ ມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ ສະເໜີລາຍຊື່ຄູປະຈຳທີ່ຜ່ານການຄັດເລືອກ ຕໍ່ສະພາການສຶກສາຊັ້ນສູງແຫ່ງຊາດ ໂດຍຜ່ານອົງການຈັດຕັ້ງທີ່ສະຖານການສຶກສາຊັ້ນສູງຂຶ້ນກັບ, ກະຊວງສຶກສາທິການ ແລະ ກິລາ ຕາມລຳດັບ;

1.5. ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ມອບໃຫ້ຄະນະກຳມາທິການທີ່ກ່ຽວຂ້ອງຄົ້ນຄວ້າຄັດເລືອກ ໂດຍອີງຕາມຜົນການຄັດເລືອກ ແລະ ປະເມີນຜົນຂອງສະພາມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງ ທີ່ກ່ຽວຂ້ອງ;

1.6. ສະພາການສຶກສາຊັ້ນສູງແຫ່ງຊາດ ເປີດກອງປະຊຸມຄົ້ນຄວ້າຜົນການຄັດເລືອກ ຂອງຄະນະກຳມາທິການທີ່ກ່ຽວຂ້ອງ ແລ້ວລົງຄະແນນສຽງແບບປິດລັບ ເພື່ອຮັບຮອງ ຊຶ່ງຄູປະຈຳທີ່ຜ່ານການຄັດເລືອກຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນ ຜູ້ເຂົ້າຮ່ວມກອງປະຊຸມ;

1.7. ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ສະເໜີກະຊວງສຶກສາທິການ ແລະ ກິລາ ພິຈາລະນານຳສະເໜີນາຍົກລັດຖະມົນຕີພິຈາລະນາແຕ່ງຕັ້ງ.

2. ສາດສະດາຈານກຽດຕິຄຸນ

2.1. ສະພາ ມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ ເປີດກອງປະຊຸມພິຈາລະນາຄົ້ນຄວ້າຜົນງານດ້ານວິຊາການ ທີ່ໄດ້ຂຽນ ແລະ ສິດສອນ ກ່ຽວກັບວິຊາສະເພາະຂອງຄູບໍ່ປະຈຳດ້ວຍການລົງຄະແນນສຽງແບບປິດລັບ ບົນພື້ນຖານການສະເໜີຂອງກຳມະການສະພາມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງ ສອງ ທ່ານ ຫຼື ສາດສະດາຈານ ໜຶ່ງ ທ່ານ ຊຶ່ງຄູບໍ່ປະຈຳທີ່ຜ່ານການຄັດເລືອກຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ;

2.2. ປະທານສະພາ ມະຫາວິທະຍາໄລ ຫຼື ສະຖານການສຶກສາຊັ້ນສູງທີ່ກ່ຽວຂ້ອງ ສະເໜີລາຍຊື່ຄູບໍ່ປະຈຳທີ່ຜ່ານການຄັດເລືອກ ຕໍ່ສະພາການສຶກສາຊັ້ນສູງແຫ່ງຊາດ ໂດຍຜ່ານອົງການຈັດຕັ້ງທີ່ສະຖານການສຶກສາຊັ້ນສູງຂຶ້ນກັບ, ກະຊວງສຶກສາທິການ ແລະ ກິລາ ຕາມລຳດັບ;

2.3. ສະພາການສຶກສາຊັ້ນສູງແຫ່ງຊາດ ເປີດກອງປະຊຸມພິຈາລະນາຄົ້ນຄວ້າ ກ່ຽວກັບຜົນງານຂອງຄູບໍ່ປະຈຳທີ່ຜ່ານການຄັດເລືອກນັ້ນ ແລ້ວລົງຄະແນນສຽງແບບປິດລັບ ເພື່ອຮັບຮອງ ຊຶ່ງຄູບໍ່ປະຈຳທີ່ຜ່ານການຄັດເລືອກຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ;

2.4. ປະທານສະພາການສຶກສາຊັ້ນສູງແຫ່ງຊາດ ສະເໜີກະຊວງສຶກສາທິການ ແລະ ກິລາ ພິຈາ ລະນານຳສະເໜີນາຍົກລັດຖະມົນຕີ ພິຈາລະນາແຕ່ງຕັ້ງ.

3. ສາດສະດາຈານກິດຕິມະສັກ

3.1. ກຳມະການສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ ສອງ ທ່ານ ຫຼື ສາດສະດາຈານ ໜຶ່ງ ທ່ານ ຄົ້ນຄວ້າສະເໜີຊື່ ຄູບໍ່ປະຈຳ ທີ່ມີຜົນງານດີເດັ່ນຕໍ່ ສະຖາບັນການສຶກສາຊັ້ນສູງ, ປະເທດຊາດ ແລະ ສັງຄົມ ຕໍ່ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ;

3.2. ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ເປີດກອງປະຊຸມ ພິຈາລະນາຄົ້ນຄວ້າຜົນງານດີເດັ່ນ ຂອງຄູບໍ່ປະຈຳທີ່ໄດ້ຮັບການສະເໜີດັ່ງກ່າວ ດ້ວຍການລົງຄະແນນສຽງ ແບບປິດລັບ ຊຶ່ງຄູບໍ່ປະຈຳທີ່ຜ່ານການຄັດເລືອກ ຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນ ສາມ ຂອງຈຳນວນຜູ້ເຂົ້າຮ່ວມກອງປະຊຸມ;

3.3. ປະທານສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ສະເໜີ ອະທິການບໍດີມະຫາວິທະຍາໄລ ຫຼື ຫົວໜ້າສະຖາບັນການສຶກສາຊັ້ນສູງ ພິຈາລະນາແຕ່ງຕັ້ງ.

4. ສາດສະດາຈານພິເສດ

4.1. ສະພາວິຊາການຂອງ ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ ຄົ້ນຄວ້າ ຜົນງານຂອງຄູບໍ່ປະຈຳ ຕາມເງື່ອນໄຂ ແລະ ມາດຕະຖານ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ບົນພື້ນຖານ ການສະເໜີ ຂອງຄະນະວິຊາ ຂອງສະຖາບັນການສຶກສາຊັ້ນສູງ ແລ້ວນຳສະເໜີ ຕໍ່ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ;

4.2. ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ເປີດກອງປະຊຸມ ຄົ້ນຄວ້າຜົນງານຂອງຄູບໍ່ປະຈຳດັ່ງກ່າວ ແລ້ວລົງຄະແນນສຽງແບບປິດລັບ ເພື່ອຮັບຮອງ ຊຶ່ງຄູບໍ່ປະຈຳ ທີ່ຜ່ານການຄັດເລືອກຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຜູ້ເຂົ້າຮ່ວມ ກອງປະຊຸມ;

4.3. ປະທານສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ສະເໜີ ອະທິການບໍດີມະຫາວິທະຍາໄລ ຫຼື ຫົວໜ້າສະຖາບັນການສຶກສາຊັ້ນສູງ ພິຈາລະນາແຕ່ງຕັ້ງ.

5. ອາຈານ ແລະ ຜູ້ຊ່ວຍອາຈານ

5.1. ຄະນະບໍດີ ແຕ່ງຕັ້ງຄະນະກຳມະການສະເພາະ ເພື່ອປະເມີນຜົນງານການສິດສອນ, ຜົນງານ ທາງວິຊາການ ແລະ ຄຸນສົມບັດສົມທຳປະຕິວັດ ບົນພື້ນຖານການຍື່ນຄຳຮ້ອງ ແລະ ເອກະສານປະກອບ ຂອງຄູປະຈຳທີ່ມີຈຸດປະສົງຂໍຕຳແໜ່ງວິຊາການຄູແຕ່ລະຂັ້ນ ຕາມແບບພິມປະເມີນຜົນ ແລ້ວນຳສະເໜີສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ;

5.2. ປະທານສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງ ແຕ່ງຕັ້ງຄະນະກຳມະການ ທີ່ປະກອບດ້ວຍ ເກົ້າ ທ່ານ ທີ່ເປັນຜູ້ຊົງຄຸນວຸດທິໃນສາຂາວິຊາທີ່ກ່ຽວຂ້ອງ ຊຶ່ງປະກອບດ້ວຍ ບຸກຄົນພາຍ ນອກທີ່ມີຈຳນວນຫຼາຍກວ່າເຄິ່ງໜຶ່ງ ເພື່ອຄັດເລືອກດ້ວຍການລົງຄະແນນສຽງ ບົນພື້ນຖານການປະເມີນ ຜົນງານດ້ານວິຊາການ ຕາມແບບພິມປະເມີນຜົນ ພາຍໃນກຳນົດ ສິບຫ້າ ວັນ;

5.3. ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ເປີດກອງປະຊຸມຄົ້ນ ຄວ້າຜົນການຄັດເລືອກຂອງຄະນະກຳມະການ ແລ້ວລົງຄະແນນສຽງແບບປິດລັບ ເພື່ອຮັບຮອງ ຊຶ່ງຄູປະຈຳ ທີ່ຜ່ານການຄັດເລືອກຕ້ອງໄດ້ຮັບຄະແນນສຽງເຫັນດີ ຢ່າງໜ້ອຍ ສອງສ່ວນສາມ ຂອງຈຳນວນຜູ້ເຂົ້າຮ່ວມ ກອງປະຊຸມ;

5.4. ສະພາ ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ ສະເໜີລາຍຊື່ຄູປະຈຳທີ່ໄດ້ຮັບການຮັບຮອງ ຕໍ່ກະຊວງສຶກສາທິການ ແລະ ກິລາ ເພື່ອພິຈາລະນາແຕ່ງຕັ້ງ.

## ໝວດທີ 5
## ການນຳໃຊ້ຊື່ຫຍໍ້, ການອຸດໜູນ ແລະ ການສິ້ນສຸດ ຕຳແໜ່ງວິຊາການຄູ

### ມາດຕາ 19 ການນຳໃຊ້ຊື່ຫຍໍ້ຕຳແໜ່ງວິຊາການຄູ

ຄູປະຈຳທີ່ໄດ້ຮັບຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງ ຂັ້ນ ສາດສະດາຈານ, ຮອງສາດສະດາຈານ, ອາຈານ ແລະ ຜູ້ຊ່ວຍອາຈານ ມີສິດນຳໃຊ້ຊື່ຫຍໍ້ ຂອງຕຳແໜ່ງວິຊາການຄູ ເປັນພາສາລາວ ຫຼື ພາສາອັງກິດ ເພື່ອຂຽນນຳໜ້າຊື່ຂອງຕົນ.

ສຳລັບຄູບໍ່ປະຈຳ ທີ່ໄດ້ຮັບຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງຂັ້ນ ສາດສະດາຈານກຽດຕິຄຸນ, ສາດສະດາຈານພິເສດ ແລະ ສາດສະດາຈານກິດຕິມະສັກ ບໍ່ສາມາດນຳໃຊ້ຊື່ຫຍໍ້ຂອງຕຳແໜ່ງວິຊາການຄູ ເພື່ອຂຽນນຳໜ້າຊື່ຂອງຕົນ.

### ມາດຕາ 20 ການອຸດໜູນຕຳແໜ່ງວິຊາການຄູ

ຄູປະຈຳທີ່ໄດ້ຮັບຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງຂອງລັດ ໄດ້ຮັບເງິນອຸດໜູນຕຳແໜ່ງ ໂດຍການເບີກຈ່າຍໃຫ້ໃນແຕ່ລະເດືອນ ຕະຫຼອດໄລຍະເວລາທີ່ຍັງເປັນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ດັ່ງນີ້:

1. ຂັ້ນສາດສະດາຈານ ໄດ້ຮັບເງິນອຸດໜູນຕຳແໜ່ງ ເທົ່າກັບ ຫ້າສິບສ່ວນຮ້ອຍ ຂອງເງິນເດືອນພື້ນຖານ;
2. ຂັ້ນຮອງສາດສະດາຈານ ໄດ້ຮັບເງິນອຸດໜູນຕຳແໜ່ງ ເທົ່າກັບ ສີ່ສິບສ່ວນຮ້ອຍ ຂອງເງິນເດືອນພື້ນຖານ;
3. ຂັ້ນອາຈານ ໄດ້ຮັບເງິນອຸດໜູນຕຳແໜ່ງ ເທົ່າກັບ ສາມສິບສ່ວນຮ້ອຍ ຂອງເງິນເດືອນພື້ນຖານ;
4. ຂັ້ນຜູ້ຊ່ວຍອາຈານ ໄດ້ຮັບເງິນອຸດໜູນຕຳແໜ່ງ ເທົ່າກັບ ຊາວສ່ວນຮ້ອຍ ຂອງເງິນເດືອນພື້ນຖານ.

ສຳລັບຄູບໍ່ປະຈຳທີ່ໄດ້ຮັບຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງ ຂັ້ນ ສາດສະດາຈານກຽດຕິຄຸນ, ສາດສະດາຈານພິເສດ ແລະ ສາດສະດາຈານກິດຕິມະສັກ ຈະບໍ່ໄດ້ຮັບນະໂຍບາຍອຸດໜູນຕຳແໜ່ງວິຊາການຄູ ແຕ່ໄດ້ຮັບນະໂຍບາຍການສິດສອນ ຕາມການກຳນົດຂອງສະຖາບັນການສຶກສາຊັ້ນສູງທີ່ກ່ຽວຂ້ອງ.

ຄູປະຈຳ ແລະ ຄູບໍ່ປະຈຳ ທີ່ໄດ້ຮັບຕຳແໜ່ງວິຊາການຄູ ຢູ່ສະຖາບັນການສຶກສາຊັ້ນສູງຂອງເອກະຊົນນັ້ນ ຈະໄດ້ຮັບເງິນອຸດໜູນຕຳແໜ່ງ ຕາມເງື່ອນໄຂຕົວຈິງ ແລະ ການຕົກລົງເຫັນດີຂອງສະຖາບັນການສຶກສາຊັ້ນສູງເອກະຊົນທີ່ກ່ຽວຂ້ອງ.

### ມາດຕາ 21 ການສິ້ນສຸດຕຳແໜ່ງວິຊາການຄູ

ຜູ້ທີ່ໄດ້ຮັບຕຳແໜ່ງວິຊາການຄູທຸກຂັ້ນ ຈະສິ້ນສຸດຕຳແໜ່ງວິຊາການຄູ ຕາມກໍລະນີໃດໜຶ່ງ ດັ່ງນີ້:

1. ຖືກປົດຕຳແໜ່ງວິຊາການຄູ;
2. ຖືກໄລ່ອອກຈາກການເປັນ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ;
3. ເສຍຊີວິດ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການຮັບຜິດຊອບໂດຍກົງ ໃນການປະສານສົມທົບ ກັບກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ດຳລັດສະບັບນີ້ ປ່ຽນແທນດຳລັດວ່າດ້ວຍຕຳແໜ່ງວິຊາການຂອງຄູສອນ ມະຫາວິທະຍາໄລ ແລະ ສະຖາບັນການສຶກສາຊັ້ນສູງຕ່າງໆ ສະບັບເລກທີ 33/ນຍ, ລົງວັນທີ 17 ມີນາ 2000.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ

ນາຍົກລັດຖະມົນຕີ

ປອ ບຸນທອງ ຈິດມະນີ